ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

pwc

ເອກະສານລາຍງານການເງິນກາງປີ (ທົບທວນຄືນ)

ສຳລັບຮອບເວລາລາຍງານ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມີຖຸນາ 2023



www.pwc.com/la

pwc

ບົດລາຍງານຂອງຜູ້ກວດສອບໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນການເງິນກາງປີ ຂອງບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ. ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ໃນວັນທີ 30 ມິຖຸນາ 2023, ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີດຽວກັນ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີ່ຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນປະຈຳປີ ຂອງບໍລິສັດ. ຄວາມຮັບຜິດຊອບ ຂອງພວກເຮົາຄືການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ບົນພື້ນຖານການທົບທວນຄືນ ຂອງພວກເຮົາ.

ຂອບເຂດ ຂອງການທົບທວນຄືນ

ພວກເຮົາໄດ້ດຳເນີນການກວດກາ ທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410, "ການທົບທວນຄືນ ຂໍ້ມູນທາງການເງິນກາງປີທີ່ດຳເນີນການໂດຍຜູ້ກວດສອບບັນຊີອິດສະຫຼະຂອງກິດຈະການ". ການທົບທວນຄືນ ເອກະສານລາຍງານການເງິນ ກາງປີລວມມີ: ການສອບຖາມບຸກຄະລາກອນຂອງກິດຈະການ, ບຸກຄົນຜູ້ຮັບຜິດຊອບຕໍ່ຝ່າຍບັນຊີ ແລະ ການເງິນ, ດຳເນີນການວິໄຈຂໍ້ມູນ, ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນ ໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ, ເພາະການກວດສອບ ແມ່ນໄດ້ປະຕິບັດຕາມມາດຕະຖານການກວດສອບສາກົນ. ເພາະສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການ ກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບແກ່ພວກເຮົາໄດ້. ດັ່ງນັ້ນ ພວກເຮົາບໍ່ໄດ້ສະແດງຄວາມ ເຫັນ.

ສະຫຼຸບ

ບົນພື້ນຖານການທົບທວນຄືນ ຂອງພວກເຮົາ, ບໍ່ມີຫຍັງທີ່ສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າເອກະສານລາຍງານການເງິນດັ່ງກ່າວ ບໍ່ໄດ້ສະໜອງ ຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືໄດ້ວ່າມີຄວາມສຳຄັນຫຼາຍຕາມຫຼັກການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນ ເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸຼບເປີ ສ (ລາວ) ຈຳກັດຜູ້ດຽວ

ໂດຍ: ພິງພັນ ດຳຣົງພັນອຸດົມ
ຮຸ້ນສ່ວນ

ວັນທີ: 29 ສິງຫາ 2023

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ

ວັນທີ 30 ມິຖຸນາ 2023

	ຍຶດ ອະທິບາຍ	ທີ່ຍຫວນຄົນ 30 ມິຖຸນາ 2023 ລ້ານກີບ	ກວດສອຍ 31 ທັນວາ 2022 ລ້ານກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	107	1,595
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	5	440,091	174,145
ການລົງທຶນໃນຫຼັກຊັບ - ຖືໄວ້ຈົນຄົບກຳນົດ	6	5,657	-
ເຄື່ອງໃຊ້ສາງ		320	320
ຊັບສິນໝຸນວຽນອື່ນໆ		1,495	1,219
ລວມຊັບສິນໝຸນວຽນ		**447,670**	**177,279**
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	7	415,487	514,539
ເງິນກູ້ຢືມໄລຍະຍາວໃຫ້ພາກສ່ວນທີ່ກ່ຽວຂ້ອງ		861	861
ການລົງທຶນໃນຫຼັກຊັບ - ຖືໄວ້ຈົນຄົບກຳນົດ	6	5,438	11,095
ລວມຊັບສິນບໍ່ໝຸນວຽນ		**421,786**	**526,495**
ລວມຊັບສິນ		**869,456**	**703,774**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	8	129,663	77,890
ເງິນກູ້ຢືມໄລຍະຍາວ ໝຸນວຽນ	9	29,422	38,422
ອາກອນກຳໄລຄ້າງຈ່າຍ	10	13,306	13,306
ໜີ້ສິນໝຸນວຽນອື່ນໆ	11	57,605	56,673
ລວມໜີ້ສິນໝຸນວຽນ		**229,996**	**186,291**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	9	111,500	34,500
ລວມໜີ້ສິນບໍ່ໝຸນວຽນ		**111,500**	**34,500**
ລວມໜີ້ສິນ		**341,496**	**220,791**
ທຶນ			
ທຶນຈົດທະບຽນ	12	582,000	582,000
ສ່ວນເພີ່ມມູນຄ່າຮຸ້ນ	13	12,540	12,540
ກຳໄລ/(ຂາດທຶນ) ສະສົມ			
ສຳຮອງຕາມລະບຽບການ		16,047	16,047
ຍັງບໍ່ທັນແບ່ງປັນ		(82,627)	(127,604)
ລວມທຶນ		**527,960**	**482,983**
ລວມໜີ້ສິນ ແລະ ທຶນ		**869,456**	**703,774**

ທ່ານ ນາງ ໄຂທອງ ພົມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ມິຖຸນາ 2023

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Co.,Ltd
ວັນທີ: 29 ມິຖຸນາ 2023

ບັນທຶກອະທິບາຍຂໍ້ຄົ້ນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 6 ຫາ 13 ແມ່ນເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

	ໝາຍ ເຫດ	ໜົກເດືອນ 30 ມິຖຸນາ 2023 ລ້ານກີບ	ໜົກເດືອນ 30 ມິຖຸນາ 2022 ລ້ານກີບ
ລາຍຮັບຈາກ ການກໍ່ສ້າງ		-	-
ຕົ້ນທຶນໃນການກໍ່ສ້າງ		-	-
ກຳໄລລວມຂັ້ນຕົ້ນ		-	-
ກຳໄລຈາກການຂາຍຊັບສິນ		46,620	-
ກຳໄລຈາກການດ້ອຍຄ່າ, ສຸດທິ		5,789	447
ລາຍຮັບອື່ນໆ		405	2,007
ລາຍຈ່າຍບໍລິຫານ		(1,396)	(1,976)
(ຂາດທຶນ)/ກຳໄລ ຈາກອັດຕາແລກປ່ຽນ		(342)	2,480
ລາຍຈ່າຍດອກເບ້ຍ		(6,099)	(4,014)
ກຳໄລ/(ຂາດທຶນ) ກ່ອນຈ່າຍອາກອນກຳໄລ		**44,977**	**(1,056)**
ລາຍຈ່າຍອາກອນກຳໄລ	15	-	-
ກຳໄລ/(ຂາດທຶນ) ທຶນສຳລັບຮອບເວລາ		**44,977**	**(1,056)**
ກຳໄລ (ຂາດທຶນ) ຕໍ່ຮຸ້ນ			
ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ	16	77.28	(1.81)

ທ້າວ ລັດ ພົມມະຈັດ
ຜູ້ອຳນວຍການໃຫຍ່
ວັນທີ: 29 ສິງຫາ 2023

ທ່ານ ນາງ ໄຣທອງ ພົມມະຈັດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ສິງຫາ 2023

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບຮອບເວລາລາຍງານ ຫົກເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2023

	ປີດ ອະທິບາຍ	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ສຳຮອງຕາມລະບຽບການ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ບໍ່ໄດ້ຈັດສັນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2023 - ກວດສອບ	12,13	**582,000**	**12,540**	**16,047**	**(127,604)**	**482,983**
ກຳໄລພາຍໃນຮອບເວລາ		-	-	-	44,977	44,977
ໃນວັນທີ 30 ມິຖຸນາ 2023 - ທີ່ທວນຄືນ		**582,000**	**12,540**	**16,047**	**(82,627)**	**527,960**
ຍອດຍົກມາ ໃນວັນທີ 1 ມັງກອນ 2022 - ກວດສອບ	12,13	**582,000**	**12,540**	**11,572**	**(167,879)**	**438,233**
ຂາດທຶນພາຍໃນຮອບເວລາ		-	-	-	(1,056)	(1,056)
ໃນວັນທີ 30 ມິຖຸນາ 2022 - ທີ່ທວນຄືນ		**582,000**	**12,540**	**11,572**	**(168,935)**	**437,177**

ທ່ານ ສົມໃຈ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 29 ສິງຫາ 2023

ທ່ານ ນາງ ໄຂທອງ ພົມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ສິງຫາ 2023

ບົດອະທິບາຍຂ້ອນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 6 ຫາ 13 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານ ກະແສເງິນສົດ
ສຳລັບຮອບເວລາລາຍງານ ຫົກເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2023

	ໝາຍ ອະທິບາຍ	ທີ່ຍຕວນຄົນ 30 ມິຖຸນາ 2023 ລ້ານກີບ	ທີ່ຍຕວນຄົນ 30 ມິຖຸນາ 2022 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລ/(ຂາດທຶນ) ກ່ອນອາກອນກຳໄລສຳລັບຮອບເວລາ		44,977	(1,056)
ການດັດແກ້:			
- ຂາດທຶນ/(ກຳໄລ)ຈາກອັດຕາແລກ		337	(2,480)
- ຄ່າຫຼ້ຍຫ້ຽນ	7	105	558
- ລາຍຈ່າຍດອກເບ້ຍ		6,099	4,014
- ກຳໄລຈາກການສະສາງຊັບສິນ		(46,620)	-
- ກຳໄລຈາກການດ້ອຍຄ່າ, ສຸດທ້	6	(5,789)	(479)
(ຂາດທຶນ)/ກຳໄລ ຈາກກິດຈະກຳການດຳເນີນງານ ກ່ອນການປ່ຽນແປ່ງໃນຊັບສິນ ແລະ ໜີ້ສິນ ດຳເນີນງານ		**(891)**	**557**
ການປ່ຽນແປ່ງໃນຊັບສິນດຳເນີນງານ:			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(139,590)	(299)
- ຊັບສິນໝຸນວຽນອື່ນໆ		(276)	(2,026)
ການປ່ຽນແປ່ງໃນໜີ້ສິນດຳເນີນງານ:			
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		51,436	1,898
- ໜີ້ສິນໝຸນວຽນອື່ນໆ		96	244
ເງິນສົດ (ໃຊ້ໄປ)/ໄດ້ມາຈາກກິດຈະກຳດຳເນີນງານ		**(89,225)**	**374**
ລາຍຈ່າຍດອກເບ້ຍ		(5,263)	(430)
ເງິນສົດສຸດທ້ ໃຊ້ໃນ ກິດຈະກຳດຳເນີນງານ		**(94,488)**	**(56)**
ເງິນສົດໄດ້ມາຈາກກິດຈະກຳການລົງທຶນ:			
ລັບເງິນຈາກການຂາຍຊັບສິນ		25,000	-
ເງິນສົດສຸດທ້ ໃຊ້ໄປໃນກິດຈະກຳ ການລົງທຶນ		**25,000**	**-**
ກະແສເງິນສົດ ຈາກກິດຈະກຳ ການປະກອບທຶນ			
ເງິນສົດຮັບຈາກເງິນກູ້ຢືມ	9	77,000	-
ເງິນສົດຈ່າຍຄືນເງິນກູ້ຢືມ	9	(9,000)	(64)
ເງິນສົດສຸດທ້ ໃຊ້ໄປ/(ໄດ້ມາ) ໃນກິດຈະກຳ ການປະກອບທຶນ		**68,000**	**(64)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ສຸດລົງ, ສຸດທ້		**(1,488)**	**(120)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນຮອບເວລາ	4	1,595	176
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຮອບເວລາ	4	**107**	**56**
ລາຍການທີ່ບໍ່ແມ່ນເງິນສົດ			
ຍັກລ້ຽງໜີ້ຕ້ອງຮັບຈາກລັດຖະບານລາວ ແລະ ການລົງທຶນພັນທະບັດທີ່ຖືໄວ້ຈົນເຖິງກຳນົດ	6	5,789	479
ໜີ້ຕ້ອງຮັບຈາກການຂາຍ ພັນທະບັດທີ່ຖືໄວ້ຈົນເຖິງກຳນົດ	6	5,789	-
ລາຍການຂາຍຊັບສິນ		120,567	-

ທ່ານ ໄພສີ ພົມມະຈັດ
ຜູ້ອຳນວຍການໃຫຍ່
ວັນທີ: 29 ສິງຫາ 2023

ທ່ານ ນາງ ໄຣທອງ ພົມມະຈັດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ສິງຫາ 2023

ຍົກເວັ້ນຂໍ້ມູນທີ່ໄດ້ລະບຸເປັນຢ່າງອື່ນ ຂໍ້ມູນທີ່ລະບຸໃນໜ້ານີ້ ແມ່ນເປັນສ່ວນໜຶ່ງ ຂອງ ແລະ ຕ້ອງອ່ານ ຄຽງຄູ່ ກັບ ໝາຍເຫດ ປະກອບ ຂໍ້ 6 ຫາ 13 ທີ່ລະບຸໄວ້ໃນ ລາຍງານ ການເງິນ ສະບັບນີ້.

1. ຂໍ້ມູນທົ່ວໄປ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນບໍລິສັດມະຫາຊົນ, ທີ່ຢູ່ຈົດທະບຽນຂອງບໍລິສັດແມ່ນຕັ້ງຢູ່ ໂຮງແຮມ ຄອນຕິເນນ ໂທໜຣາຊ່າ, ບ້ານໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ ລາວ.

ບໍລິສັດດຳເນີນກິດຈະການດ້ານການກໍ່ສ້າງ, ສ້ອມແປງ ແລະ ບຳລຸງຮັກສາ ທາງ, ຂົວ ແລະ ອື່ນໆ. ມີໜ້ວຍງານຄ້າຕ່າງປະ ກໍ່ຄື ລັດຖະບານ ຂອງ ສປປ ລາວ (ລັດຖະບານລາວ).

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ໃນວັນທີ 10 ຕຸລາ 2017.

ເອກະສານລາຍງານການເງິນກາງປີນີ້ ໄດ້ຮັບອະນຸຍາດໃຫ້ອອກໂດຍຜູ້ອຳນວຍການ ຂອງບໍລິສັດ ໃນວັນທີ 29 ສິງຫາ 2023.

2. ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນກາງປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບວິທີການບັນຊີຂອງ ບໍລິສັດ ທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2022. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ) ທີ່ສອດຄ່ອງ ກັບເອກະສານລາຍງານການເງິນປະຈຳປີ ຕາມກົດລະບຽບການເປີດເຜີຍ ທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນກາງປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2022.

ຂໍ້ສົມມຸດຖານການດຳເນີນງານຕໍ່ເນື່ອງ

ສະຖານະການເງິນຂອງບໍລິສັດມີໜີ້ສິນໝຸນວຽນເກີນຊັບສິນໝຸນວຽນ ຈຳນວນ 85,298 ລ້ານກີບ (ບໍ່ລວມລາຍການຂອງ ພາກສ່ວນກ່ຽວຂ້ອງ ສຸດທິ). ພາກສ່ວນກ່ຽວຂ້ອງໄດ້ອອກຈົດໝາຍຢືນຢັນເຖິງບໍລິສັດ ວ່າຈະບໍ່ຮຽກເກັບ ໜີ້ຕ້ອງສົ່ງ ນະວັນທີ 30 ມິຖຸນາ 2023, ລວມມູນຄ່າທັງໝົດ 119,034 ລ້ານກີບ ພາຍໃນ 12 ເດືອນຕໍ່ໜ້າ ເລີ່ມແຕ່ວັນທີ 30 ມິຖຸນາ 2023 ເປັນຕົ້ນ ໄປ ແລະ ສະໜັບສະໜຸນບໍລິສັດໂດຍຍອມຮັບຄວາມສ່ຽງຜິດຊອບ ໃນການຈັດຫາ ແລະ ດຳເນີນການໃຫ້ຄວາມຊ່ວຍເຫຼືອທາງການ ເງິນຢ່າງພຽງພໍໃຫ້ແກ່ບໍລິສັດຕາມຄວາມຈຳເປັນ ແລະ ເມື່ອມີຄວາມຈຳເປັນ ເພື່ອໃຫ້ບໍລິສັດສາມາດດຳເນີນກິດຈະການຕໍ່ໄປ ແລະ ປະຕິບັດຕາມພາລະຜູກພັນທາງການເງິນທັງໝົດໃນປະຈຸບັນ ແລະ ອານາຄົດ ຈົນກວ່າບໍລິສັດຈະມີຖານະທາງການເງິນພຽງພໍ.

ດັ່ງນັ້ນ, ເອກະສານລາຍງານການເງິນເຫຼົ່ານີ້ໄດ້ຖືກກະກຽມຍົກພື້ນຖານການດຳເນີນງານຕໍ່ເນື່ອງ.

3. ການຄາດຄະເນ

ການກະກຽມຂໍ້ມູນທາງການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານ ມີການຕັດສິນໃຈ, ການຄາດຄະເນ ແລະ ສົມມຸດຕິຖານທີ່ມີຜົນ ກະທົບການນຳໃຊ້ນະໂຍບາຍການບັນຊີ ແລະ ປະລິມານການລາຍງານຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ຄ່າໃຊ້ຈ່າຍ ຜົນ ທີ່ແທ້ຈິງອາດຈະແຕກຕ່າງຈາກທີ່ປະມານ.

ໃນການກະກຽມຂໍ້ມູນທາງການເງິນ ຜູ້ບໍລິຫານໃຊ້ວິຈາລະນະຍານໃນການເລືອກໃຊ້ນະໂຍບາຍບັນຊີ ແລະ ເລືອກໃຊ້ຂໍ້ມູນທີ່ຈະໃຊ້ ເຂົ້າໃນການປະມານການ, ເຊິ່ງການໃຊ້ວິຈາລະນະຍານດັ່ງກ່າວເປັນວິທີການດຽວກັນກັບວິທີທີ່ໃຊ້ໃນການເຮັດ ເອກະສານລາຍງານ ການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2022.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບໍ່ທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ເງິນສົດໃນມື	14	9
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	93	1,586
ລວມ	**107**	**1,595**

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	ທີ່ບໍ່ທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ໜີ້ຕ້ອງຮັບການຄ້າ	296,928	302,717
ຫັກ: ສຳຮອງໜີ້ສົງໄສຈະເສຍ	(279,452)	(285,241)
ໜີ້ຕ້ອງຮັບການຄ້າ, ສຸດທິ	17,476	17,476
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 17) ຂ)	422,560	156,614
ໜີ້ຕ້ອງຮັບອື່ນໆ	55	55
ລວມ	**440,091**	**174,145**

6. ການລົງທຶນໃນຫຼັກຊັບ - ຫຼີກ່ວ່າຈົນຄົບກຳນົດ

	ທີ່ບໍ່ທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ຍອດຍົກມາ ນະວັນທີ 1 ມັງກອນ	11,095	10,616
ເພີ່ມຂຶ້ນ*	5,789	479
ສະສາງ**	(5,789)	-
ລວມ	**11,095**	**11,095**

* ໃນລະຫວ່າງໄລຍະຮອບເວລາ ບໍລິສັດໄດ້ຮັບພັນທະບັດທີ່ອອກໂດຍກະຊວງການເງິນ ເພື່ອຊຳລະໜີ້ຕ້ອງຮັບຈາກ ໂຄງການກໍ່ສ້າງ.
** ໃນລະຫວ່າງໄລຍະຮອບເວລາ ບໍລິສັດໄດ້ຂາຍພັນທະບັດໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.

	ທີ່ບໍ່ທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ໝຸນວຽນ	5,657	-
ບໍ່ໝຸນວຽນ	5,438	11,095
ລວມ	**11,095**	**11,095**

7. ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ

	ລ້ານກີບ
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2023 - ກວດສອບ	514,539
ສະສາງ*	(98,947)
ຄ່າຫຼ້ຍຫ້ຽນ	(105)
ຍອດເຫຼືອທ້າຍຮອບເວລາ ສຸດທິ ໃນວັນທີ 30 ມິຖຸນາ 2023 - ທົບທວນຄືນ	**415,487**

* ໃນລະຫວ່າງໄລຍະຮອບເວລາ ໄດ້ສະສາງ ຂາຍທີ່ດິນໃຫ້ແກ້ພາກສ່ວນທີ່ກ່ຽວຂ້ອງ.

ທີ່ດິນຈຳນວນ 152,804 ລ້ານກີບ ແມ່ນ ເປັນຫຼັກຊັບຄ้ำປะกันเงินกู้ยืม (ບົດອະທິບາຍ 9) ແລະ ຈຳນວນ 254,004 ລ້ານກີບ ແມ່ນຫຼັກຊັບค้ำประกันเพื่อกู้ยืมจากกลุ่มบริษัทพูสี.

8. ໜີ້ຕ້ອງຮັ່ງທາງການຄ້າ ແລະ ໜີ້ຕ້ອງຮັ່ງອື່ນໆ

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ໜີ້ຕ້ອງຮັ່ງການຄ້າ - ພາກສ່ວນອື່ນ	10,076	11,068
ໜີ້ຕ້ອງຮັ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 17) ຂ)	119,587	66,822
ລວມ	**129,663**	**77,890**

9. ເງິນກູ້ຢືມ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ສະຖາບັນການເງິນ	140,922	72,922
ລວມ	**140,922**	**72,922**

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ໝຸນວຽນ	29,422	38,422
ບໍ່ໝຸນວຽນ	111,500	34,500
ລວມ	**140,922**	**72,922**

9. ເງິນກູ້ຢືມ, ສຸດທິ (ຕໍ່)

ລາຍການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້:

	ລ້ານກີບ
ຍອດຍົກມາ ວັນທີ 1 ມັງກອນ 2023 - ກວດສອບ	72,922
ເພີ່ມຂຶ້ນ	77,000
ຊຳລະເງິນກູ້ຢືມຄືນ	(9,000)
ຍອດເຫຼືອ ໃນວັນທີ 30 ມິຖຸນາ 2023 - ທົບທວນຄືນ	**140,922**

ເງິນກູ້ຢືມຈາກສະຖາບັນການເງິນ:

ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມຈຳນວນ 36,000 ລ້ານກີບ ແລະ 5,000 ລ້ານກີບ ກັບ ທະນາຄານ ເອັດສທີ ຈຳກັດ ເພື່ອເປັນທຶນໝຸນວຽນ ສຳລັບການກໍ່ສ້າງ ທາງ ເຊິ່ງມີອັດຕາດອກເບ້ຍ 17% ແລະ 13% ຕໍ່ປີ ຕາມລຳດັບ ນັບຕັ້ງແຕ່ ວັນທີ 29 ທັນວາ 2015, ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ້ຳປະກັນ (ເບິ່ງອະທິບາຍຂໍ້ 7) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ. ບໍລິສັດ ຕ້ອງໄດ້ຊຳລະຕົ້ນທຶນພາຍໃນ 3 ປີ ນັບແຕ່ວັນທີ່ທີ່ເບີກເງິນກູ້ຄັ້ງທຳອິດໃນແຕ່ລະປີ ແລະ ຈ່າຍດອກເບ້ຍເປັນລາຍເດືອນ.

ນະວັນທີລາຍງານ, ບໍລິສັດ ຢູ່ໃນລະຫວ່າງເຈລະຈາເງື່ອນໄຂຄືນໃໝ່ກັບຜູ້ໃຫ້ກູ້ຢືມ ແລະ ບໍລິສັດຍັງສືບຕໍ່ ຮັບຮູ້ລາຍຈ່າຍດອກເບ້ຍ ອີງຕາມເງື່ອນໄຂທີ່ລະບຸໄວ້ໃນຂ້າງເທິງ.

ສຳລັບຮອບເວລາຫົກເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2023, ມີການຊຳລະເງິນກູ້ ຈຳນວນ 9,000 ລ້ານກີບ.

ບໍລິສັດ ໄດ້ເຮັດສັນຍາກູ້ຢືມເງິນ ວົງເງິນຈຳນວນ 300 ຕື້ກີບ ກັບທະນາຄານການຄ້າພາຍໃນປະເທດ ເຊິ່ງມີອັດຕາດອກເບ້ຍ 9.50% ຕໍ່ປີ ເລີ່ມແຕ່ວັນທີ 29 ທັນວາ 2022 ຫາ 29 ທັນວາ 2027. ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ້ຳປະກັນ (ເບິ່ງອະທິບາຍຂໍ້ 7) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ. ບໍລິສັດຕ້ອງຊຳລະຄືນຕົ້ນທຶນເງິນກູ້ ພາຍໃນ 3ປີ ຫລັງຈາກຖອນນຳໃຊ້ເງິນກູ້ງວດທຳອິດ ເປັນລາຍປີ ແລະ ຊຳລະດອກເບ້ຍເປັນລາຍເດືອນ.

ສຳລັບຮອບເວລາສິ້ນສຸດວັນທີ 30 ມິຖຸນາ 2023, ມີການເບີກຖອນນຳໃຊ້ເງິນກູ້ ຈຳນວນ 77,000 ລ້ານກີບ.

ການວິເຄາະເງິນກູ້ຢືມດັ່ງກ່າວມີດັ່ງຕໍ່ໄປນີ້:

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ຕ່ຳກວ່າ 1 ປີ	29,422	38,422
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	111,500	34,500
ລວມ	**140,922**	**72,922**

10. ອາກອນກຳໄລຄ້າງຈ່າຍ

ອີງຕາມການປະຕິບັດການຊຳລະອາກອນລະຫວ່າງໜ່ວຍງານສ່ວຍສາອາກອນ ແລະ ບໍລິສັດ, ອາກອນກຳໄລຖືກຄິດໄລ່ໂດຍການປະເມີນອັດຕາກຳໄລສຸດທິ ຄູນໃຫ້ອັດຕາອາກອນກຳໄລ ແລະ ລາຍໄດ້ຈາກການກໍ່ສ້າງ. ອາກອນກຳໄລຈະໄດ້ຮັບການສະສາງຄືນເມື່ອລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນວັນທີ 30 ມິຖຸນາ 2023, ອາກອນກຳໄລຄ້າງຈ່າຍແມ່ນມາຈາກລາຍຮັບການກໍ່ສ້າງ ແຕ່ລັດຖະບານ ຍັງບໍ່ທັນໄດ້ຊຳລະເທື່ອ.

11. ໜີ້ສິນໝຸນວຽນອື່ນໆ

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ອາກອນມູນຄ່າເພີ່ມຄ້າງຈ່າຍ*	20,435	20,435
ດອກເບ້ຍຄ້າງຈ່າຍຈາກສະຖາບັນການເງິນ	30,784	29,948
ເງິນປັນຜົນຄ້າງຈ່າຍ	1,863	1,863
ເງິນຮັບລ່ວງໜ້າຈາກ ຜູ້ຮັບເໝົາ	930	930
ເງິນຮັບລ່ວງໜ້າຈາກລັດຖະບານ	893	893
ເງິນເດືອນຄ້າງຈ່າຍ	84	57
ອື່ນໆ	2,616	2,547
ລວມ	**57,605**	**56,673**

* ອາກອນມູນຄ່າເພີ່ມຄ້າງຈ່າຍ ໄດ້ຖືກຄິດໄລ່ໂດຍ ຄູນໃຫ້ 10% (ກ່ອນປີ 2022) ຂອງລາຍຮັບຈາກການກໍ່ສ້າງ ແລະ ຈະຖືກຈ່າຍກໍ່ຕໍ່ເມື່ອລັດຖະບານລາວຊຳລະໜີ້ໃຫ້ບໍລິສັດ.

12. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນໃນທຶນຈົດທະບຽນ

ໃນວັນທີ 30 ມິຖຸນາ 2023 ບໍລິສັດມີຮຸ້ນ ຈຳນວນ 582,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 1,000 ກີບ ແລະ ໄດ້ຊຳລະຄົບໝົດແລ້ວ.

ບໍລິສັດ ເກີດມີສ່ວນເພີ່ມຂອງມູນຄ່າຮຸ້ນ ຈຳນວນ 12,540 ລ້ານກີບ ແລະ ຖືກຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບໃນປີ 2017.

13. ສຳຮອງຕາມລະບຽບການ

ສຳຮອງຕາມລະບຽບການແມ່ນຕັ້ງຂຶ້ນຕາມກົດໝາຍວ່າດ້ວຍ ວິສາຫະກິດ ຂອງ ສປປ ລາວ ເຊິ່ງກຳນົດໃຫ້ຫັກ 10% ຂອງກຳໄລສຸດທິປະຈຳປີເຂົ້າເງິນສຳຮອງຈົນກວ່າເງິນສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

14. ເງິນປັນຜົນ

2023:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນວັນທີ 27 ເມສາ 2023. ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2022 ເນື່ອງຈາກຂາດທຶນສະສົມ.

2022:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນວັນທີ 29 ເມສາ 2022. ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2021 ເນື່ອງຈາກຂາດທຶນຈາກການດຳເນີນທຸລະກິດ.

15. ລາຍຈ່າຍອາກອນກຳໄລ

ຕາມຫຼັກການຊຳລະອາກອນກຳໄລ ລະຫວ່າງ ເຈົ້າໜ້າທີ່ສ່ວຍສາອາກອນ ແລະ ບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ (ບົດອະທິບາຍຂໍ້ 10), ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງ ແຕ່ລັດຖະບານຂອງ ສປປ ລາວ ຍັງບໍ່ທັນໄດ້ຊຳລະເງິນ.

16. ກຳໄລພື້ນຖານຕໍ່ຮຸ້ນ

ໃນວັນທີ 30 ມິຖຸນາ 2023, ຂາດທຶນພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການແບ່ງປັນຂາດທຶນສຸດທິຂອງຜູ້ຖືຮຸ້ນຂອງບໍລິສັດ. ໂດຍຈຳນວນສະເລ່ຍນ້ຳໜັກຂອງຮຸ້ນສາມັນໃນລະຫວ່າງປີ.

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ
ຈຳນວນສະເລ່ຍຂອງຮຸ້ນສາມັນ (ລ້ານຮຸ້ນ)	582	582
ກຳໄລ/(ຂາດທຶນ) ສຸດທິໃນຮອບເວລາ ໃຫ້ຜູ້ຖືຮຸ້ນ (ລ້ານກີບ)	44,977	(1,056)
ກຳໄລ/(ຂາດທຶນ) ພື້ນຖານຕໍ່ຮຸ້ນ (ກີບ)	**77.28**	**(1.81)**

17. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

17. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ໃນວັນທີ 30 ມິຖຸນາ 2023, ບໍລິສັດ ແມ່ນຢູ່ພາຍໃຕ້ການຄວບຄຸມໂດຍ ຄອບຄົວ ພົມມະຈັດ, ເຊິ່ງຖືຮຸ້ນ 86% ຂອງ ຮຸ້ນບໍລິສັດ (2022: 86%). ສ່ວນຮຸ້ນທີ່ເຫຼືອ 14% ແມ່ນຖືຮຸ້ນໂດຍບຸກຄົນທົ່ວໄປ, ບໍລິສັດຖືກຄວບຄຸມໂດຍ ທ່ານ ສີທອງ ພົມມະຈັດເຊິ່ງ ເປັນຜູ້ບໍລິຫານຂອງກຸ່ມບໍລິສັດ ພູສີ ຈຳກັດ ຜູ້ດຽວ (ກຸ່ມບໍລິສັດ ພູສີ).

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງໄລຍະ ໄດ້ວິເຄາະດັ່ງລຸ່ມນີ້:

ກ) ຊື້ສິນຄ້າ ຫຼື ບໍລິການ ແລະ ອື່ນໆ

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ
ລາຍຮັບດອກເບ້ຍຈາກ ພູສີກາຣຸບ	-	1,731
ລາຍຈ່າຍດອກເບ້ຍ	-	830
ຄ່ານ້ຳມັນ	115	243
ຄ່າເຊົ່າ	75	90

ຂ) ຍອດຄ້າງຊຳລະກັບພາກສ່ວນທີ່ກ່ຽວຂ້ອງ

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 5)*	422,560	156,614
ເງິນໃຫ້ກູ້ຢືມໄລຍະສັ້ນແກ່ພາກສ່ວນທີ່ກ່ຽວຂ້ອງ	861	861
ໜີ້ຕ້ອງສົ່ງອື່ນໆ - ກຸ່ມບໍລິສັດ ພູສີ (ບົດອະທິບາຍຂໍ້ 8)	119,587	66,822

* ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງປະກອບມີ ກຸ່ມບໍລິສັດ ພູສີ ຈຳກັດຜູ້ດຽວ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ໂດຍ ບໍ່ມີດອກເບ້ຍ ແລະ ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ.

ຄ) ຄ່າຕອບແທນຜູ້ບໍລິຫານ

ບໍ່ມີຜົນປະໂຫຍດ ທີ່ໄດ້ຈ່າຍໃຫ້ຜູ້ບໍລິຫານ ໃນລະຫວ່າງຮອບເວລາ.

18. ພາລະຜູກພັນ

	ທົບທວນຄືນ 30 ມິຖຸນາ 2023 ລ້ານກີບ	ກວດສອບ 31 ທັນວາ 2022 ລ້ານກີບ
ພັນທະຄ່າເຊົ່າຫ້ອງການ *	450	525
ຄ່າບໍລິການ	738	817

* ບໍລິສັດເປັນຜູ້ເຊົ່າທີ່ດິນ ແລະ ຫ້ອງການ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານໂດຍບໍ່ມີການຍົກເລີກສັນຍາ. ໄລຍະເຊົ່າແມ່ນ 10 ປີ ແລະ ສ່ວນໃຫຍ່ຂອງສັນຍາເຊົ່າສາມາດຕໍ່ສັນຍາເມື່ອສັນຍາຈະໝົດອາຍຸຕາມການຕົກລົງກັນ.

19. ເຫດການທີ່ເກີດຂຶ້ນຫລັງມື້ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນຫລັງຈາກວັນທີ 30 ມິຖຸນາ 2023 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ.